# ປູກປ່າ

## ກັບ ລິນ ແລະ ໃສ

ພາບປະກອບໂດຍ ທ່ານ ເຄດ ດາວສ໌
ອີງຕາມຜົນງານການເຮັດວຽກ ຂອງ
ໜ່ວຍງານຄົ້ນຄວ້າການຟື້ນຟູປ່າໄມ້ ຂອງ
ມະຫາວິທະຍາໄລຊຽງໃໝ່



artRELIEF INTERNATIONAL

FOREST RESTORATION RESEARCH UNIT



# ກ່ຽວກັບຈິດຕະກອນ

ທ່ານ ນາງ ເຄດ ດາວສີ ເປັນນັກແຕ້ມຮູບແຕ້ມ ອິດສະຫຼະ, ດຳລົງຊີວິດ ແລະ ເຮັດວຽກຢູ່ລອນດອນ. ນາງໄດ້ມີສ່ວນຮ່ວມໃນການຜະລິດປຶ້ມກາຕູນຫົວນີ້, ໃນຂະນະທີ່ເຮັດວຽກກັບ Art Relief International, ໃນຕົ້ນປີ 2013. ນາງໄດ້ພົບເຫັນ ບັນທຶກ ຢູ່ທີ່ຫ້ອງການ ARI ຈາກ ກອງປະຊຸມລະດົມ ແນວຄວາມຄິດກັບ ໜຶ່ງໃນບັນດາອົງການຄູ່ຮ່ວມງານ ຂອງ ARI, FORRU-CMU, ຊຶ່ງແນະນຳປຶ້ມກາຕູນ ສຳລັບເດັກນ້ອຍ ແລະ ໄດ້ຕັດສິນໃຈຕອບຮັບທີ່ຈະ ດຳເນີນການພັດທະນາກາຕູນດັ່ງກ່າວ. ການຟື້ນຟູ ປ່າໄມ້ ແມ່ນເປັນສິ່ງທີ່ສຳຄັນຕໍ່ນາງຫຼາຍ ແລະ ນາງ ມັກທີ່ຈະປະກອບສ່ວນເຂົ້າໃນ ວຽກງານຂອງ FORRU. ເກືອບທຸກເນື້ອໃນຂອງປຶ້ມກາຕູນຫົວນີ້ ແມ່ນ ມາຈາກປຶ້ມຄູ່ມືຂອງ FORRU - "ວິທີການປູກປ່າ", ພ້ອມດ້ວຍຂໍ້ມູນເພີ່ມຕື່ມ ຈາກ ທີມງານ FORRU, ຊຶ່ງ ນາງ ເຄດ ຮູ້ສຶກເປັນໜີ້ບຸນຄຸນຕະຫຼອດການ ສຳລັບ ເວລາທີ່ເຂົາເຈົ້າໄດ້ພາໄປເບິ່ງສະຖານທີ່ ແລະ ສວນກ້າ ແລະ ການຕອບຄຳຖາມວິຊາການ ຂອງ ເຂົາເຈົ້າ ໂດຍ ມີຄວາມອົດທົນຫຼາຍ.

**peppermint.illustration@gmail.com**


ພໍ່ເຖົ້າຈະພົບເຮົາຢູ່ໃສ?
ໄປອີກໜ້ອຍໜຶ່ງ ຕາມທາງນີ້
ພວກເຮົາຄວນຈະເລີ່ມຍ່າງ ກ່ອນທີ່ມັນຈະຮ້ອນໂພດ
ເອີ, ເປັນຄວາມຜິດ ຂອງ ໃຜບໍ່?
ເຈົ້າຕ້ອງໃຊ້ເວລາກິນໜຶ່ງຊົ່ວໂມງ
ຂ້ອຍຫິວເຂົ້າແລ້ວ
ຂ້ອຍຊ່ວຍຫຍັງບໍ່ໄດ້ ຖ້າຫິວເຂົ້າ
ເບິ່ງແມະ, ຫັນເດພໍ່ເຖົ້າ!
ລິນ!ໄຊ!
ພໍ່ເຖົ້າ!


ຂ້ອຍຄິດວ່າ ພວກເຈົ້າຈະມາໄວກວ່ານີ້
ທ້າວໃສ ບໍ່ຍອມຢຸດກິນ.
ເຈົ້າກຳລັງພາພວກເຮົາໄປເບິ່ງປ່າໄມ້ ແມ່ນບໍ?
ແມ່ນ. ມັນຕ້ອງໄດ້ຍ່າງໄກ
ຂ້ອຍຫວັງວ່າ ໃກ້ຈະຮອດແລ້ວ, ຫຼື ຄິດວ່າມັນຄົງຈະໃຫຍ່ກວ່າທີ່ຄິດ
ພວກເຮົາສາມາດຍ່າງ ໄປຕາມກ້ອງຮົ່ມ
ຕອນຂ້ອຍຍັງນ້ອຍ. ມີຕົ້ນໄມ້ຫຼາຍ
ປະເທດໄທ ເຄີຍປົກຄຸມໄປດ້ວຍປ່າໄມ້ແບບນີ້. ເປັນທີ່ຢູ່ອາໃສ ຂອງ ສັດ ແລະ ພືດ ຈໍານວນຫຼວງຫຼາຍ. ແຕ່ວ່າ ພວກມັນຖືກທໍາລາຍ ໄປເຄິ່ງໜຶ່ງ
ຫຼາຍກວ່າເຄິ່ງໜຶ່ງພຸ້ນບໍ?!


ເນື້ອທີ່ປ່າໄມ້ 2/3 ຂອງ ໄທ ໄດ້ສູນເສຍ ນັບຕັ້ງແຕ່ປີ 1961.
ນັ້ນ ກໍບໍ່ໄດ້ຂີ້ຮ້າຍ, ປີ 1961 ເປັນເວລາຜ່ານໄປຫຼາຍປີແລ້ວ
ພໍ່ເຖົ້າ ອາຍຸແກ່ກວ່ານັ້ນ!
ມັນເປັນຄວາມຈິງ. ການທຳລາຍປ່າໄມ້ ສ່ວນໃຫຍ່ ເກີດຂຶ້ນຫວ່າງບໍ່ດົນມານີ້.
ໃນອະດີດຜ່ານມາ, ຄົນເຮົາ ຈະຖາງປ່າໜ້ອຍໜຶ່ງ ໃນຊ່ວງເວລາໃດໜຶ່ງ ຕາມຄວາມຈຳເປັນ - ເຊັ່ນ ເພື່ອໃຫ້ມີທີ່ດິນ ສຳລັບເຮັດກະສິກຳ ຫຼື ໄມ້ ເພື່ອໃຊ້ເຮັດບາງຢ່າງ
ມັນຈະໃຊ້ເວລາດົນ ໃນການຕັດຕົ້ນໄມ້ ດ້ວຍການນຳໃຊ້ຂວັນ
ເມື່ອ ປະຊາກອນເພີ່ມຂຶ້ນ, ໃນເວລານັ້ນ ເທັກໂນໂລຊີໃໝ່ ເຮັດໃຫ້ພວກເຮົາ ສາມາດບຸກເບີກທີ່ດິນ ຂະໜາດໃຫຍ່.
... ແຕ່ສິ່ງດັ່ງກ່າວນີ້ ບໍ່ໄດ້ໃຊ້ເວລາດົນເລີຍ.
ການທຳລາຍປ່າໄມ້ ເປັນບັນຫາທົ່ວໂລກ


ແຕ່ ຖ້າວ່າ ພວກເຮົາຕ້ອງການ ທີ່ດິນ ສໍາລັບ ເຮັດກະສິກໍາ - ມັນກໍ ບໍ່ຂີ້ຮ້າຍ, ແມ່ນບໍ?
ແນ່ນອນ, ບໍ່ຂີ້ຮ້າຍເລີຍ...
ແຕ່ວ່າ ມັນມີຫຼາຍເຫດຜົນ ສໍາລັບ ການຮັກສາປ່າໄມ້.
ເຊັ່ນວ່າ ມີຫຍັງແດ່?
ນົກລ້າ ເປັນໂຕເບິ່ງສັດຕູພືດ ທີ່ທໍາລາຍພືດ
ມີຫຼາຍຜະລິດຕະພັນທີ່ແຕກຕ່າງ ກັນ ທີ່ເປັນອາຫານ, ເຊັ່ນ ເຫັດ, ໜໍ່ໄມ້,... ແລະ ນໍ້າເຜີ້ງ
ຂ້ອຍມັກນໍ້າເຜີ້ງ
ອາວ!!!
ຍັງມີສັດຫຼາຍໂຕ ທີ່ຕ້ອງການອາໃສຢູ່ໃນປ່າໄມ້ໃຫຍ່ - ປ່າໄມ້ ຕ້ອງການສັດ ແລະ ນົກ ເພື່ອກະຈາຍແກ່ນພັນ ດັ່ງນັ້ນ ເຮັດໃຫ້ຕົ້ນໄມ້ສາມາດເກີດຫຼາຍຂຶ້ນ. ຕອນ ຂ້ອຍຍັງນ້ອຍ, ພວກເຮົາມີແມະກະທັ້ງ ຊ້າງ!


ຕົ້ນໄມ້ ຍັງມີໜ້າທີ່ອື່ນທີ່ສໍາຄັນ. ໃບໄມ້ທີ່ຕາຍ ເຮັດໃຫ້ດິນອຸດົມສົມບູນ, ເຮັດໃຫ້ມັນສາມາດ ດູດຊຶມນໍ້າໄດ້ຫຼາຍ. ຮາກຂອງມັນ ຊ່ວຍປ້ອງກັນ ການເຊາະເຈື່ອນ. ດັ່ງນັ້ນ, ຫຼຸດຜ່ອນຄວາມສ່ຽງ ທີ່ຈະເກີດດິນຖະລົ່ມ.
ເຂົ້າໃຈແລ້ວ! ຈາກນັ້ນ, ດິນຈະຮັກສານໍ້າ ເປັນເວລາຫຼາຍເດືອນ ເມື່ອພວກເຮົາບໍ່ມີ ຝົນ.
ດັ່ງນັ້ນ, ຖ້າບໍ່ມີຕົ້ນໄມ້ ....
ພວກເຮົາມີໄພແຫ້ງແລ້ງ ໃນຊ່ວງ ລະດູແລ້ງ
ແລະ ເກີດມີນໍ້າຖ້ວມ ໃນເວລາມີຝົນຕົກ.... ອູ່ ໂອ.


ບໍ່ມີໃຜ ຄິດເຖິງບັນຫາເຫຼົ່ານີ້ຈົນກວ່າ ມັນຈະສາຍເກີນໄປ.
ອັນນີ້ ເປັນຕາຢ້ານບໍ່!
ເຮົາສາມາດເຮັດຫຍັງໄດ້ແດ່?
ເຈົ້າຄິດວ່າ ເຮົາຄວນຈະເຮັດຫຍັງແດ່?
ພວກເຮົາ ຄວນຈະຢຸດຕັດຕົ້ນໄມ້, ເພື່ອໃຫ້ ປ່າໄມ້ສາມາດເຕີບໃຫຍ່ຂຶ້ນຄືນໄດ້.
ແຕ່ວ່າ ຖ້າບໍ່ມີ ສັດ ແລະ ນົກ ....
ໂອ, ແມ່ນແລ້ວ... ແກ່ນພັນ ຈະບໍ່ສາມາດກະຈາຍໄດ້.
ພວກເຮົາ ສາມາດປູກຕົ້ນໄມ້ຈຳນວນໜຶ່ງເພື່ອມາທົດແທນຕົ້ນໄມ້ອື່ນ!
ແຕ່ໃຫ້ຈື່ໄວ້ວ່າ...
ປ່າໄມ້ ເກີດຂຶ້ນດ້ວຍ ຫຼາຍຊະນິດພັນທີ່ແຕກຕ່າງກັນ. ພວກມັນເຕີບໃຫຍ່ ແລະ ທຳໜ້າທີ່ຮ່ວມກັນ - ອັນນີ້ ເຂົາເອີ້ນວ່າ “ຊີວະນາງພັນ”.
ແຕ່ວ່າ ເຮົາສາມາດປູກທົດແທນ ໄດ້ຫຼາຍແທ້ຫຼາຍວ່າ ໄດ້ແນວໃດ?
ໝົດຫວັງແລ້ວ.
ມັນຍັງບໍ່ທັນໝົດຫວັງ! ເຈົ້າພຽງແຕ່ຕ້ອງຮູ້ວ່າ ຈະເລີ່ມຈາກໃສ.


ເບິ່ງແມະ - ນີ້ແມ່ນໜຶ່ງໃນຈຳນວນສະຖານທີ່ ທີ່ຖືກຖາງ
ທັງໝົດ ແມ່ນຕໍ່ໄມ້ຂອງຕົ້ນໄມ້ທີ່ຕາຍ
ໜ້າເສົ້າບໍ


ບໍ່ແມ່ນຕໍທັງໝົດຕາຍ! ເບິ່ງນີ້ແມະ
ມັນບໍ່ທັນຕາຍ!


ແມ່ນ, ມັນເລີ່ມງອກອອກອີກຄັ້ງ. ເຫັນບໍ, ທຸກຄັ້ງ
ປ່າໄມ້ຈະຕ້ອງການເກີດຂຶ້ນຄືນ.


ແລະ ເບິ່ງແມະ - ຕົ້ນອ່ອນໄດ້ເກີດຂຶ້ນແລ້ວ
ເອີ, ມີໄອເດຍດີບໍ!
ຂ້ອຍກຳລັງຈະເອົາວັດສະພືດອອກ


ເມື່ອພວກເຮົາຊ່ວຍໃຫ້ປ່າເກີດຂຶ້ນແບບນີ້, ພວກເຮົາ
ຮຽກວ່າ ການຊ່ວຍຟື້ນຟູໂດຍທຳມະຊາດ - “ANR”


ພວກເຮົາ ຄວນເຮັດແບບນີ້ ຢູ່ທຸກບ່ອນ ທີ່ພວກເຮົາສາມາດເຮັດໄດ້!
ພວກເຮົາຈະຕ້ອງຊອກຫາສະຖານທີ່ ທີ່ດີທີ່ສຸດ ສໍາລັບເຮັດແບບນີ້.
ໂຕນີ້ ຢູ່ໃກ້ກັບປ່າໄມ້, ດັ່ງນັ້ນ, ມັນງ່າຍ ສໍາລັບ ນົກ ແລະ ສັດ ທີ່ຈະຫວານແກ່ນ.
ພວກເຮົາ ສາມາດຊຸກຍູ້ສິ່ງດັ່ງກ່າວນີ້ ດ້ວຍການສ້າງບ່ອນໃຫ້ນົກບິນມາເກາະ
... ແລະ ກ່ອງສໍາລັບເຈຍ
ພວກເຮົາ ສາມາດປູກແກ່ນດ້ວຍຕົນເອງໄດ້ບໍ?
ແນ່ນອນ! ຂ້ອຍຊິສອນເຈົ້າວ່າເຮັດແນວໃດ.
ເຈົ້າສາມາດນໍາໃຊ້ໄມ້ ເຮັດເປັນຮູ - ຮັບປະກັນວ່າເຈົ້າໄດ້ເອົາວັດສະພືດຢູ່ບ່ອນນີ້ ອອກນໍາ.
ເມື່ອເອົາແກ່ນໃສ່ໃນຮູແລ້ວ, ເຈົ້າສາມາດຖົມຮູດ້ວຍດິນ.
ເຈົ້າເລີ່ມຕົ້ນໄດ້ດີແລ້ວເດ!


ພວກເຮົາ ສາມາດ ເຮັດຫຍັງຕື່ມ ໄດ້ແດ່?
ເອີ, ສຳລັບແຜນປູກຕົ້ນໄມ້ ຂອງພວກເຮົາເດ ເປັນແນວໃດ? ຢ່າງໜ້ອຍ ຕອນນີ້ ຢ່າພ້າວຢຶກເລີກເທື່ອ.
ເຂົາເຈົ້າກຳລັງເຮັດຫຍັງ ຢູ່ບ່ອນນັ້ນ?
ເຂົາເຈົ້າ ກຳລັງເກັບແກ່ນ ຈາກຕົ້ນໄມ້.
ເຈົ້າເຫັນບໍ. ໃນຂະນະທີ່ ພວກເຮົາບໍ່ສາມາດ ຟື້ນຟູທຸກຢ່າງໄດ້ ໃນຄັ້ງດຽວ, ພວກເຮົາ ສາມາດຊອກເບິ່ງວ່າ ຈະເລີ່ມຕົ້ນກັບຕົ້ນໄມ້ໃດ ໃຫ້ໄດ້ດີທີ່ສຸດ.
ຕົ້ນໄມ້ເຫຼົ່ານີ້ ຈະສ້າງກອບ ສຳລັບການຟື້ນຟູປ່າໄມ້ - ດັ່ງນັ້ນ ພວກເຮົາຮຽກພວກມັນວ່າ Framework Species (ຊະນິດພັນທີ່ຢູ່ໃນກອບ)



ອັນໃດເຮັດໃຫ້ເປັນ Framework Species ທີ່ດີ?
ໃນການເລີ່ມຕົ້ນ, ພວກມັນ ຈະຕ້ອງສາມາດຢູ່ລອດໄດ້ ເມື່ອຖືກປູກ ຢູ່ໃນສະຖານທີ່ ທີ່ມີການທຳລາຍປ່າໄມ້...
ມັນຈະຕ້ອງໃຫຍ່ໄວ, ແລະ ມີການແຜ່ເຮືອນຍອດ ຂອງ ໃບ ຢ່າງໜາແໜ້ນ ເພື່ອກຳຈັດວັດສະພືດ... ພວກມັນຍັງຈະຕ້ອງມີໝາກ ແລະ ດອກ ໃນເວລາອາຍຸຍັງອ່ອນ, ເພື່ອດຶງດູດສັດ ແລະ ນົກ ໃຫ້ກະຈາຍແກ່ນ.


ຖ້າຕົ້ນໄມ້ ມີຄວາມເໝາະສົມ, ພວກເຮົາ ກໍສາມາດເກັບ ແກ່ນໄດ້.
ນີ້ແມ່ນແກ່ນຈຳນວນ ໜຶ່ງ ທີ່ຂ້ອຍໄດ້ເກັບ.
ຂອບໃຈ!
ມັນເບິ່ງເໝືອນກັບໝາກໄມ້ບໍ່!
ແກ່ນ ກໍ່ຢູ່ທາງໃນໝາກໄມ້ ຫັ້ນແລະ, ເຈົ້າຄືຊິຮູ້ດີ.
ເບິ່ງແຕ່ລະຊະນິດແມະ!
ພວກເຮົາຈະປູກພວກມັນບໍ?
ແມ່ນ - ແຕ່ບໍ່ທັນຢູ່ໃນພື້ນດິນເທື່ອ. ພວກມັນ ຕ້ອງການ ການຊ່ວຍເຫຼືອໜ້ອຍໜຶ່ງ.
ເຈົ້າກຳລັງພາພວກເຮົາໄປໃສ?
ໄປບາງບ່ອນ ທີ່ພວກເຮົາ ສາມາດບົວລະບັດພືດໄດ້.


ສ່ອນກ້າ!
ນີ້ແມ່ນບ່ອນທີ່ພວກເຮົາຈະປູກແກ່ນ ແລະ ບໍາລຸງຮັກສາພວກມັນ ໃນຂະນະທີ່ມັນເລີ່ມໃຫຍ່.
ລິນ, ໃສ, ນີ້ແມ່ນມະລິ.
ເຈົ້າຢາກເບິ່ງສອນກ້າຢູ່ບໍ?
ແມ່ນແລ້ວ!
ພວກເຮົາກິນເຂົ້າກ່ອນບໍ?


ພວກເຮົາປູກແກ່ນ ໃສ່ໃນຖາດ ເຫຼົ່ານີ້.
ໂຕນີ້ ໄດ້ເລີ່ມໃຫຍ່ແລ້ວ!
ເມື່ອພວກມັນໃຫຍ່ພໍ, ພວກເຮົາສາມາດເອົາໄປປູກ ໃສ່ໃນໂຖ. ເຈົ້າຢາກລອງບໍ?
ພວກເຮົາຈະໃຊ້ດິນປະເພດ ໃດ?
ເອີນີ້ເດ.
ມັນເປັນການປະສົມລະຫວ່າງ ດິນປ່າເຄິ່ງໜຶ່ງ, ເປືອກໝາກຖົ່ວດິນເຄິ່ງໜຶ່ງ.
ຂ້ອຍມັກຖົ່ວດິນ!
ຂ້ອຍກໍມັກເຂົ້າ ແລະ ໝາກພ້າວຄືກັນ!
ເຈົ້າໃຊ້ເປືອກເຂົ້າ ຫຼື ເປືອກໝາກພ້າວກໍ ໄດ້.
ໃສ, ເຈົ້າຢ່າຊິກິນດິນເດີ.


ທຳອິດ, ພວກເຮົາຈະ
ຕື່ມດິນປະສົມໃສ່ໃນຖົງ.
ຕໍ່ມາ, ວາງລົງພື້ນດິນ ເພື່ອໃຫ້ດິນ
ນອນລົງ - ບໍ່ໄດ້ຍາກເລີຍ!
ແບບນີ້ບໍ?
ຈາກນັ້ນ, ຕື່ມດິນໃສ່ຖົງອີກ...
ແລະ ເຮັດເປັນຮູປູກ?
ຖືກຕ້ອງ!
ຮັບປະກັນວ່າ ມີພື້ນທີ່ສຳລັບຮາກ.
ລະວັງເດີ, ໂຕນັ້ນ
ແມ່ນໄປທາງຂ້າງ
ອືມ.
ເອົາເບ້ຍໄມ້ອອກ ດ້ວຍຊ້ອນນ້ອຍ
...ເຮັດເບົາໆ...
ຕອນນີ້ ພວກເຮົາຈະຕື່ມດິນອີກເທື່ອໜຶ່ງ
ແລະ ປ່ອຍໃຫ້ມັນນອນລົງອີກຄັ້ງ.
ຕອນນີ້ໃຫ້
ລະວັງ!
ລອງເບິ່ງນຳກັນ... ດີໆ, ບໍ່ໃຫ້ໜັກ ຫຼື ເບົາ
ໂພດ. ເບ້ຍໄມ້ຖືກວາງໃສ່ ເປັນຢ່າງດີ.
ດີຫຼາຍ!
ພວກເຮົາເຮັດຕື່ມອີກຈຳນວນ
ໜຶ່ງໄດ້ບໍ?


ການປູກເປັນແນວໃດແລ້ວ ?
ພວກເຮົາເຮັດໄດ້ດີຫຼາຍ!
ຕອນນີ້, ພວກເຮົາຈະຫົດນ້ຳ ແລະ ໃສ່ຝຸ່ນ ເບ້ຍໄມ້.
ພວກເຮົາຈະປົກປ້ອງພວກມັນ ບໍ່ໃຫ້ຕິດພະຍາດ... ແລະ ສັດຕູພືດ ເຊັ່ນ ບົ້ງ
ອູ!
ພວກເຮົາຍັງຈະຕ້ອງກຳຈັດວັດສະພືດ, ແລະ ເລືອກເຟັ້ນເອົາຕົ້ນທີ່ດີ ອອກຈາກ ຕົ້ນທີ່ບໍ່ ດີ.
ແລະ ແນ່ນອນ, ພວກເຮົາຈະຮັກສາ ບໍ່ໃຫ້ສັດເຂົ້າໃກ້.
ໃນໄວໆນີ້, ພວກເຮົາ ຈະມີຕົ້ນໄມ້ອ່ອນ ທີ່ພ້ອມສຳລັບການ ປູກ.



ຈະປູກ ຕົ້ນໄມ້ໃໝ່ ຕອນໃດ?
ບ້ານຕ່າງໆ ຈະຕ້ອງເຮັດວຽກຮ່ວມກັນກັບ ເຈົ້າໜ້າທີ່ທ້ອງຖິ່ນ ແລະ ກົມປ່າໄມ້ ເພື່ອຕັດສິນໃຈ ກ່ຽວກັບສະຖານທີ່.
ມັນຍັງມີຄວາມສຳຄັນ ທີ່ພວກເຮົາຈະໄດ້ຮັບອະນຸຍາດ ເພື່ອນຳໃຊ້ທີ່ດິນ - ດັ່ງນັ້ນ, ພວກເຮົາຕ້ອງເລີ່ມວາງແຜນ ຢ່າງໜ້ອຍ ໜຶ່ງປີລ່ວງໜ້າ.
ໜຶ່ງປີເລີຍບໍ?!
ຂໍເຂົ້າຫົນແດ່ໄດ້ບໍ ໃນຊ່ວງທີ່ພວກເຮົາລໍຖ້າ
ມັນເປັນໂຄງການໃຫຍ່ຫຼາຍ - ປ່າໄມ້ ມີຄວາມສຳຄັນ, ແລະ ພວກເຮົາຕ້ອງວາງແຜນທຸກຢ່າງ.
ພວກເຮົາຈະໄປເບິ່ງສະຖານທີ່ທີ່ມີທ່າແຮງເລີຍບໍ?
ແມ່ນແລ້ວ!


ເບິ່ງເໝືອນກັບວ່າ ບ່ອນນີ້ເປັນສະຖານທີ່ທີ່ດີ - ເຂົາເຈົ້າກຳລັງບັນທຶກ ຕຳແໜ່ງ ດ້ວຍ GPS.
ດັ່ງນັ້ນ, ພວກເຮົາຈະບອກໄດ້ແນວໃດ ວ່າ ມັນເປັນສະຖານທີ່ ທີ່ດີ ຫຼື ບໍ່?
ມັນຄວນຈະຢູ່ໃກ້ກັບສ່ວນອື່ນ ຂອງ ປ່າໄມ້, ດັ່ງນັ້ນ ເມື່ອ ຕົ້ນໄມ້ໃຫຍ່ຂຶ້ນ, ພວກມັນສາມາດກາຍເປັນສ່ວນໜຶ່ງ ຂອງປ່າໄມ້ ແລະ ເຮັດໃຫ້ປ່າໄມ້ ມີຂະໜາດໃຫຍ່ຂຶ້ນ.
ແລະ ພວກເຮົາໄດ້ເວົ້າແລ້ວ ກ່ຽວກັບສາຍພົວພັນທີ່ສຳຄັນ ລະຫວ່າງ ຕົ້ນໄມ້ ແລະ ນ້ຳ...
ດັ່ງນັ້ນ, ພວກເຮົາຊອກຫາສະຖານທີ່ ທີ່ມີນ້ຳ
ເຈົ້າບອກວ່າ ຕົ້ນໄມ້ສາມາດຊ່ວຍປ້ອງກັນ ການເຊາະເຈື່ອນ?
ຖືກແລ້ວ. ພວກເຮົາຍັງຊອກຫາພື້ນທີ່ ທີ່ມີຄວາມສ່ຽງ ທີ່ຈະເກີດການເຊາະເຈື່ອນ.


ຂ້ອຍຮູ້ສຶກຕື່ນເຕັ້ນ ທີ່ຈະເລີ່ມປູກ!
ພວກເຮົາສາມາດເລີ່ມຕອນໃດ?
ພວກເຮົາ ຕ້ອງເກືອບມີຄວາມພ້ອມ...
ເກືອບມີຄວາມພ້ອມ!
ກ່ອນອື່ນໝົດ, ພວກເຮົາຕ້ອງກໍາຈັດວັດ ສະພືດຢູ່ໃນຕອນດິນ.
ນອກຈາກນັ້ນ, ພວກເຮົາຈະໝາຍ ຕົ້ນໄມ້ອ່ອນທຸກຕົ້ນ ທີ່ໃຫຍ່ແລ້ວ.
ຈາກນັ້ນ, ພວກເຮົາຈະຈັດຕັ້ງ ອາສາສະໝັກ, ແລະ ຮັບປະກັນ ວ່າ ເຂົາເຈົ້າໝົດທຸກຄົນ ມີອຸປະກອນ ແລະ ການຂົນສົ່ງ.
ແລະ ແນ່ນອນ ແມ່ນການເອົາ ຕົ້ນໄມ້ອ່ອນຈາກ ສວນກ້າ.
ຂ້ອຍຫວັງວ່າ ເຂົາເຈົ້າຂັບລົດ ດ້ວຍຄວາມລະມັດລະວັງ!


ເບິ່ງເຈົ້າທັງສອງຄົນ
ເໝືອນກັບພ້ອມທີ່ຈະປູກ!
ພວກເຮົາດູດີຫຼາຍ! ຂ້ອຍຂໍ
ຖືໝອກໄປນຳໄດ້ບໍ?
ພວກເຮົາໄດ້ແບ່ງກັນອອກເປັນທີມ.
ພວກເຮົາ ກຳລັງຈະປູກ ຢູ່ບ່ອນນັ້ນ.
ເຂົາເຈົ້າວັດແທກຮຽບຮ້ອຍແລ້ວ ວ່າຈະຂຸດຢູ່ໃສ.
ເບິ່ງແມະ, ມີມະລິນຳ!
ສະບາຍດີ!
ໃຫ້ຕັດຖົງຢາງອອກ ແລະ ພວກເຮົາສາມາດ
ເອົາມັນວາງລົງໃສ່ພື້ນດິນ.
ເຈົ້າໝັ້ນໃຈແລ້ວບໍວ່າ ມັນເປັນແນວ
ຄວາມຄິດທີ່ດີ ທີ່ຈະປ່ອຍໃຫ້ໄຊຖືມີດ.
ຂ້ອຍໝັ້ນໃຈ ລາວໂອເຄຢູ່.


ຕອນນີ້, ພວກເຮົາຈະຫວ່ານປຸ໋ຍ ເພື່ອເປັນການເອົາອາຫານໃຫ້ຕົ້ນໄມ້.
ຫຼັງຈາກນັ້ນ, ພວກເຮົາສາມາດລ້ຽງຕົນເອງໄດ້ບໍ່?
ແຜນວົງມົນ ໃຊ້ໄວ້ເຮັດຫຍັງ?
ເຂົາເອີ້ນວ່າ ແຜ່ນປົກດິນ - ມັນເປັນໂຕຢຸດການເກີດຂອງວັດສະພືດ ຢູ່ອ້ອມຮອບ ຕົ້ນໄມ້ອ່ອນ.


ພວກເຮົາ ໄດ້ປູກຕົ້ນໄມ້ຈັກຕົ້ນແລ້ວ?
3000 ຕົ້ນ ຕໍ່ ເຮັກຕາ.
ເບິ່ງເໝືອນກັບວ່າ ຫຼາຍບໍ່!
ແມ່ນ - 500 ຕົ້ນ ຕໍ່ ໄຮ!


ພວກເຮົາປູກຫຼາຍ. ດັ່ງນັ້ນ, ພວກມັນຈະກຳຈັດ ທຸກວັດສະພືດ ໄວເທົ່າທີ່ຈະໄວໄດ້ ...
ແຕ່ວ່າຫຼາຍກວ່ານັ້ນ ແລະ ພວກມັນຈະແຫຍ້ກັນໂພດ.


ຮັບປະກັນວ່າ ປູກຕົ້ນໄມ້ອ່ອນ ຢ່າງຖືກຕ້ອງ.
ເຂົາເຈົ້າກຳລັງເຮັດຫຍັງ?
ຕົ້ນໄມ້ຂອງຂ້ອຍ ຖືກປູກ ຢ່າງຖືກຕ້ອງ!
ພວກເຮົາ ຈະຕ້ອງເຮັດຫຍັງ?
ພວກເຮົາຈະຕ້ອງເບິ່ງແຍງຮັກສາຕົ້ນໄມ້ໃນເວລາມັນເຕີບໃຫຍ່.
ພວກເຮົາ ຈະສືບຕໍ່ນຳໃຊ້ຝຸ່ນ ສຳລັບສອງລະດູຝົນຄັ້ງທຳອິດ.
ແລະ ພວກເຮົາຈະກຳຈັດວັດສະພືດ ສຳລັບ ສາມລະດູຝົນຄັ້ງທຳອິດ.
ແນ່ນອນ, ພວກເຮົາຈະສືບຕໍ່ວັດແທກຕົ້ນໄມ້ ໃນຕອນມັນເຕີບໃຫຍ່, ແລະ ສືບຕໍ່ບັນທຶກ...
ແລະ ພວກເຮົາຈະສືບຕໍ່ເຝົ້າເບິ່ງນົກ ແລະ ສັດ ທີ່ກັບມາຄືນ.
ຈາກນັ້ນ, ກໍມີຫຼາຍຢ່າງເຮັດບໍ່.


ຖ້າກ່ອນ! ພໍ່ໃຫຍ່! ເບິ່ງແມະ!
ມີບັນຫາຫຍັງ?
ເບິ່ງແມະ! ໄຟໄໝ້!
ໂອ!
ບໍ່ຕ້ອງຫ່ວງ, ມັນຢູ່ໄກຫຼາຍ.
ແຕ່ວ່າ ມັນສາມາດຫຍັບເຂົ້າມາໃກ້ຂຶ້ນ!
ຕົ້ນໄມ້ເດ ເປັນແນວໃດ!
ມັນເປັນບັນຫາໜຶ່ງ...
ແຕ່ວ່າ ມັນມີບາດກ້າວ ທີ່ພວກເຮົາສາມາດນຳໃຊ້ ເພື່ອປ້ອງກັນບໍ່ໃຫ້ມັນເກີດຂຶ້ນ. ໃນການເລີ່ມຕົ້ນ, ພວກເຮົາສາມາດຈັດເປັນທີມງານຕ່າງໆ ເພື່ອເຝົ້າລະວັງ ແລະ ແຈ້ງເຕືອນພວກເຮົາ ເໝືອນກັບເຈົ້າໄດ້ເຮັດ, ໃສ.
ຖ້າມັນຊ້າ ແລະ ນ້ອຍ, ສາມາດຄວບຄຸມໄຟໄດ້ ດ້ວຍເຄື່ອງມືທຳມະດາ.
ອູອູ...
ຖ້າມັນໃຫຍ່ກວ່ານັ້ນ, ພວກເຮົາສາມາດໂທຫາເຈົ້າໜ້າທີ່ດັບເພີງ ມາຊ່ວຍ.


ແມ່ນຫຍັງເກາະ?
ພວກເຮົາຍັງສາມາດປົກປ້ອງຕອນດິນ ດ້ວຍແລວກັນໄຟ.
ແລວກັນໄຟ ແມ່ນຫຍັງ?
ຂ້ອຍຊິພາເຈົ້າໄປເບິ່ງ.
ເຫັນບໍ? ພວກເຮົາ ຕັດເອົາວັດສະພືດອອກ ເປັນສອງແຄວ ຍາວ ແລະ ຈູດວັດສະພືດທີ່ເຫຼືອຢູ່ທາງກາງ. ສິ່ງດັ່ງກ່າວນີ້ ກໍ ໃຫ້ເກີດເປັນຕົວກັ້ນໄຟ ທີ່ຈະລາມມາຫາ...
...ແລະ ປົກປ້ອງຕອນດິນ.
ດັ່ງນັ້ນ, ບໍ່ຕ້ອງກັງວົນຫຼາຍ
ໃຄແນ່ໂລງໃຈ!


ພວກເຮົາສາມາດສະແດງຄວາມເຄົາລົບ ຕໍ່ຕົ້ນໄມ້ສັກສິດ ແລະ ຂອບໃຈວິນຍານຕ່າງໆ ຫຼັງຈາກຜ່ານລະດູແລ້ງທີ່ປອດໄພໃໝ້.
ແລະ ຍ້ອນທຸກຄົນເຮັດວຽກນຳກັນ, ມັນຈຶ່ງມີຄວາມສຳຄັນ ທີ່ຈະສະຫຼອງນຳກັນ.
ໃນທີ່ສຸດ! ກໍຈະໄດ້ກິນອາຫານ
ເມື່ອໃດ ຕົ້ນໄມ້ຈະກາຍເປັນປ່າ? ໃນໄວໆນີ້ບໍ?
ມັນຈະໃຊ້ເວລາດົນນານ. ປ່າໄມ້ໃຊ້ເວລາຫຼາຍປີ ທີ່ຈະເຕີບໃຫຍ່.
ແມ່ນຄວາມຈິງ... ແຕ່ ຍ້ອນມີຕົ້ນໄມ້ ທີ່ໃຫຍ່ໄວ ແລະ ວຽກທັງໝົດທີ່ເຮັດເພີ່ມ, ພວກເຮົາຈະເຫັນຜົນໄດ້ຮັບໄວກວ່າ ສິ່ງທີ່ເຈົ້າອາດຈະຄິດໄວ້... ຖ້າເວົ້າເປັນປີ.


ໃນຂະນະທີ່ ນົກ, ສັດ ແລະ ຊະນິດພັນ ພືດອື່ນໆ ກັບຄືນມາ...
ປ່າສາມາດເລີ່ມ ຂະບວນການຟື້ນຟູ.
ຂ້ອຍແທບຈະບໍ່ຢາກລໍຖ້າເລີຍ!
ຂ້ອຍຄືກັນ!


ໃນຊ່ວງໄລຍະນີ້ ເຈົ້າຈະເຮັດຫຍັງ?
ຂ້ອຍຈະຮຽນຮູ້ ຕົ້ນໄມ້ທັງໝົດ ທີ່ ແຕກຕ່າງກັນ ແລະ ວິທີປູກພວກ ມັນ.
ຂ້ອຍກຳລັງຈະເລີ່ມເຮັດ ສະໂມສອນເບິ່ງນົກ!


ແລະ ສິ່ງທີ່ສຳຄັນທີ່ສຸດ - ຮັບປະກັນວ່າ ທຸກຄົນ ຮຽນຮູ້ກ່ຽວກັບ ປ່າໄມ້ ເໝືອນກັບສິ່ງທີ່ເຈົ້າໄດ້ເຮັດ.


ເຈົ້າຈະເຮັດຫຍັງ?

# ໜ່ວຍງານຄົ້ນຄວ້າ ການຟື້ນຟູປ່າໄມ້ ມະຫາວິທະຍາໄລຊຽງໃໝ່ (FORRU-CMU)



**FORRU-CMU** ແມ່ນທີມງານນັກນິເວດວິທະຍາ ແລະ ນັກສຶກສາຄົ້ນຄວ້າ ໃນຄະນະວິທະຍາສາດ ຂອງ ມະຫາວິທະຍາໄລຊຽງໃໝ່, ພາກເໜືອ ຂອງ ປະເທດໄທ, ຜູ້ທີ່ພັດທະນາວິທີການໃໝ່ ໃນການຟື້ນຟູ ລະບົບນິເວດປ່າໄມ້ເຂດຮ້ອນຊຸ່ມ ເພື່ອການອະນຸລັກຊີວະນາໆພັນ ແລະ ການປົກປັກຮັກສາສິ່ງແວດລ້ອມ. ໜ່ວຍງານຂອງພວກເຮົາ ຍັງມີທີມງານສຶກສາ, ທີ່ສະໜອງການຝຶກອົບຮົມດ້ານວິຊາການ ແກ່ ອົງການຈັດຕັ້ງຕ່າງໆ ຢ່າງຫຼວງຫຼາຍ.

ພວກເຮົາ ດຳເນີນການຄົ້ນຄວ້າ ກ່ຽວກັບ ລະບົບນິເວດວິທະຍາ ການສືບພັນຂອງຕົ້ນໄມ້ປ່າພື້ນເມືອງ ແລະ ການຂະຫຍາຍພັນຂອງພວກມັນ ຢູ່ໃນສວນກ້າ. ຫຼັງຈາກນັ້ນ, ການທົດລອງພາກສະໜາມ ຖືກນຳໃຊ້ ເພື່ອທົດສອບ ປະສິດທິພາບຂອງຕົ້ນໄມ້ແຕ່ລະຊະນິດ ແລະ ຕິດຕາມ ການຟື້ນຟູຊີວະນາໆພັນ ແລະ ການເກັບກັກກາກບອນ ຢູ່ໃນຕອນດິນປ່າໄມ້ ທີ່ໄດ້ຮັບການຟື້ນຟູ.

FORRU-CMU ມີສ່ວນຮ່ວມຢ່າງຕັ້ງໜ້າ ກັບ ປະຊາຊົນທ້ອງຖິ່ນ ເພື່ອເຊື່ອມໂຍງການຟື້ນຟູປ່າໄມ້ ແລະ ການອະນຸລັກ ຊີວະນາໆພັນ ເຂົ້າໃນ ຄວາມຕ້ອງການຂອງຊຸມຊົນ. ຖ້າປະຊາຊົນທ້ອງຖິ່ນ ມີການສະໜັບສະໜູນດ້ານວິຊາການ ຢ່າງເໝາະສົມ ແລະ ມີສ່ວນຮ່ວມໂດຍກົງ ຕັ້ງແຕ່ເລີ່ມຕົ້ນ, ເຂົາເຈົ້າ ຈະສ້າງຄວາມຮູ້ສຶກເປັນເຈົ້າການ ໃນການຄຸ້ມຄອງໂຄງການ ແລະ ມີສ່ວນຮ່ວມຢ່າງຕັ້ງໜ້າ ໃນການເບິ່ງແຍງ ແລະ ຕິດຕາມກວດກາ ສະຖານທີ່ ທີ່ໄດ້ຮັບການຟື້ນຟູ, ຊຶ່ງຫຼຸດຜ່ອນ ຄວາມເປັນໄປໄດ້ ຂອງ ການທຳລາຍປ່າໄມ້ ທີ່ຈະເກີດຂຶ້ນໃນພາຍຫຼັງ.

ພວກເຮົາ ໄດ້ສ້າງຕັ້ງ ໜ່ວຍງານຖາວທຽມ ໃນແຂວງການຈະບຸລີ ແລະ ແຂວງກະບີ່ ແລະ ພວກເຮົາ ຍັງໄດ້ເຮັດວຽກຮ່ວມກັບ ເຈົ້າໜ້າທີ່ປ່າໄມ້ ໃນ ລາວ, ຈີນ, ຟີລິບປິນ, ອິນໂດເນເຊຍ ແລະ ກຳປູເຈຍ ເພື່ອພັດທະນາ ເຕັກນິກທີ່ເໝາະສົມກັບລະບົບນິເວດທີ່ແຕກຕ່າງກັນ ແລະ ເງື່ອນໄຂທາງສັງຄົມ-ການເມືອງ ໃນແຕ່ລະປະເທດເຫຼົ່ານັ້ນ. ພວກເຮົາເຮັດວຽກຮ່ວມກັບ ກຸ່ມຊຸມຊົນ ແລະ ໂຮງຮຽນ, ອົງການອະນຸລັກສາກົນ, ອົງການຂອງລັດ ແລະ ພາກເອກະຊົນ. CMU ໃຫ້ທຶນຊ່ວຍເຫຼືອຂະໜາດນ້ອຍແກ່ FORRU, ພ້ອມທັງສະຖານທີ່ສຳລັບເປັນຫ້ອງການ ແລະ ການສະໜັບສະໜູນ ດ້ານພາລາທິການ, ແຕ່ການສະໜອງທຶນສ່ວນໃຫຍ່ຂອງພວກເຮົາ ມາຈາກທຶນຊ່ວຍເຫຼືອລ້າ ແລະ ການບໍລິຈາກສຳລັບວຽກງານການຄົ້ນຄວ້າ.

# ບ້ານແມ່ສະໃໝ

ບັນດາຕົວລະຄອນ ຢູ່ໃນກາຕູນເລື່ອງນີ້ ແມ່ນອີງໃສ່ຄົນຈິງ - ຊາວບ້ານ ຂອງ ບ້ານແມ່ສະໃໝ, ຊຶ່ງເປັນບ້ານທີ່ໃຊ້ເວລາຂັບລົດປະມານໜຶ່ງຊົ່ວໂມງໄປທາງທິດເໜືອ ຈາກ ຊຽງໃໝ່, ເປັນບ່ອນທີ່ ໜ່ວຍງານ FORRU-CMU ໄດ້ສ້າງຕັ້ງ ຕອນດິນທົດລອງການຟື້ນຟູ ບ່ອນທຳອິດ.
ບ້ານ ເປັນຊຸມຊົນຊົນເຜົ່າມົ້ງ ທີ່ໃຫຍ່ທີ່ສຸດ ໃນພາກເໜືອ ຂອງ ປະເທດໄທ, ມີ 190 ຄົວເຮືອນ ແລະ ມີປະຊາກອນທັງໝົດ ຫຼາຍກວ່າ 1,800 ຄົນ. ໃນເບື້ອງຕົ້ນ, ມັນໄດ້ຖືກສ້າງຕັ້ງຂຶ້ນ ໃນລະດັບຄວາມສູງ 1,300 ແມັດ, ແຕ່ໄດ້ຖືກຍ້າຍລົງໄປຕາມຮ່ອມພູ ສອງສາມ ກິໂລແມັດ, ຫຼັງຈາກ ມີການທຳລາຍປ່າໄມ້ ເຮັດໃຫ້ແຫຼ່ງນ້ຳຂອງບ້ານແຫ້ງ. ເຫດການນີ້ ເຮັດໃຫ້ຊາວບ້ານ ມີຄວາມຮູ້ສຶກສູງ ເຖິງ ຄວາມເຊື່ອມໂຍງ ລະຫວ່າງ ການທຳລາຍປ່າ ແລະ ການສູນເສຍແຫຼ່ງນ້ຳ.
ໃນປີ 1981, ທີ່ດິນຂອງບ້ານ ໄດ້ຖືກລວມເຂົ້າໃນ ອຸທະຍານແຫ່ງຊາດ ດອຍສຸເທບ-ປຸຍ, ຊຶ່ງໝາຍຄວາມວ່າ ຊາວບ້ານປະເຊີນກັບໄພຂົ່ມຂູ່ ຈາກ ການຂັບໄລ່ ທີ່ຕິດພັນກັບກົດໝາຍ. ເພື່ອຫຼີກລ່ຽງສິ່ງນີ້, ຊາວບ້ານບາງຄົນ ໄດ້ຕັດສິນໃຈສະແດງໃຫ້ເຫັນວ່າ ເຂົາເຈົ້າ ສາມາດເປັນຜູ້ຮັບຜິດຊອບ ຮັກສາສິ່ງແວດລ້ອມ. ເຂົາເຈົ້າ ໄດ້ສ້າງຕັ້ງ ກຸ່ມອະນຸລັກຊັບພະຍາກອນທຳມະຊາດບ້ານແມ່ສາໃໝ່ ແລະ ສ້າງຄວາມເຫັນດີເປັນເອກະພາບ ໃນທົ່ວຊຸມຊົນ ເພື່ອປູກຕົ້ນໄມ້ຄືນໃໝ່ ໃນທົ່ງທີ່ຖືກປະຖິ້ມໄວ້.
ໃນຂະນະດຽວກັນ, FORRU-CMU ໄດ້ເຂົ້າຫາ ເຈົ້າໜ້າທີ່ອຸທະຍານແຫ່ງຊາດ ເພື່ອຊອກຫາສະຖານທີ່ ທີ່ເໝາະສົມ ເພື່ອທົດລອງ ວິທີການຟື້ນຟູປ່າໄມ້ ດ້ວຍຊະນິດພັນທີ່ຢູ່ໃນກອບ (Framework Species Method). ເຈົ້າໜ້າທີ່ອຸທະຍານແຫ່ງຊາດ ໄດ້ແນະນຳເຂດແຫຼ່ງນ້ຳ ທີ່ຢູ່ເໜືອ ບ້ານແມ່ສາໃໝ ແລະ ຊາວບ້ານ ໄດ້ຕົກລົງເຫັນດີ ຍອມຮັບເອົາໂຄງການດັ່ງກ່າວ. ດັ່ງນັ້ນ, ເຂົາເຈົ້າສາມາດ ປັບປຸງຄວາມພະຍາຍາມ ໃນການຟື້ນຟູປ່າໄມ້. ການຮ່ວມມືນີ້ ໄດ້ສະໜອງ ແຫຼ່ງຄວາມຮູ້ພື້ນເມືອງໃຫ້ແກ່ ໜ່ວຍງານ FORRU - CMU, ເປັນໂອກາດທີ່ຈະທົດສອບຄວາມເປັນໄປໄດ້ ຂອງ ຜົນການຄົ້ນຄວ້າ ຂອງໜ່ວຍງານ ແລະ ແຮງງານທ້ອງຖິ່ນ ເພື່ອຊ່ວຍໃນການປູກຕົ້ນໄມ້ ແລະ ການຕິດຕາມກວດກາ.



FORRU-CMU ໄດ້ໃຫ້ທຶນແກ່ ສວນກ້າເບ້ຍຕົ້ນໄມ້ ຂອງ ບ້ານ ແລະ ໄດ້ຝຶກອົບຮົມໃຫ້ແກ່ ຊາວບ້ານ ກ່ຽວກັບວິທີການຂະຫຍາຍພັນຕົ້ນໄມ້. ໜ່ວຍງານ ຍັງຈ້າງຄອບຄົວໜຶ່ງ ໃນໝູ່ບ້ານ ເພື່ອເກັບແກ່ນພັນ ແລະ ປູກຕົ້ນໄມ້. ໃນປັດຈຸບັນ, ສວນກ້າເບ້ຍ ສາມາດຜະລິດຕົ້ນໄມ້ໄດ້ປະມານ 25,000 ຕົ້ນຕໍ່ປີ, ຊຶ່ງສ່ວນໃຫຍ່ ແມ່ນໄດ້ປູກ ຢູ່ເໜືອບ້ານໃນກາງເດືອນມິຖຸນາ, ຂອງທຸກໆປີ ນັບຕັ້ງແຕ່ປີ 1996.
ຄະນະກຳມະການບ້ານ ຈັດຕັ້ງ ການປ້ອງກັນໄຟໄໝ້ລາມປ່າ. ໄດ້ຕັດແລວກັນໄຟ ໃນກາງເດືອນມັງກອນ ແລະ ທີມງານປ້ອງກັນໄຟ ຈະປະຈຳຢູ່ສະຖານີເຝົ້າລະຫວັງໄຟ ຈົນກວ່າ ຈະເລີ່ມມີຝົນຕົກ ໃນເດືອນເມສາ. ຊາວບ້ານ ຈັດພິທີໃນຕອນເລີ່ມຕົ້ນຂອງລະດູການທີ່ມີໄຟໄໝ້ລາມປ່າ ເພື່ອອະທິຖານໃຫ້ການປ້ອງກັນໄຟໄໝ້ລາມປ່າ ປະສົບຜົນສຳເລັດ. ໜ່ວຍງານ FORRU-CMU ຈ່າຍຄ່າແຮງງານ ສຳລັບການເຮັດແລວກັນໄຟ ແລະ ສະໜອງອາຫານການກິນ ແກ່ ທີມງານປ້ອງກັນໄຟ. FORRU-CMU ຍັງຈ້າງຊາວບ້ານ ເພື່ອກຳຈັດວັດສະພືດ ອ້ອມຮອບຕົ້ນໄມ້ທີ່ປູກ ແລະ ໃສ່ປຸ໋ຍ. ການຈ່າຍເງິນ ແລະ ການປະກອບສ່ວນແບບສະໝັກໃຈນີ້ ໄດ້ຊ່ວຍສ້າງຄວາມຮູ້ສຶກເປັນເຈົ້າການຂອງທ້ອງຖິ່ນ ໃນການຄຸ້ມຄອງຕອນດິນທີ່ມີການຟື້ນຟູປ່າໄມ້ ແລະ ຄ່ອຍໆເພີ່ມການສະໜັບສະໜູນ ແກ່ ວຽກງານໃນລະດັບຊຸມຊົນ.
ດັ່ງນັ້ນ, ໃນປັດຈຸບັນ, ແຫຼ່ງນ້ຳທີ່ເຄີຍເປົ່າຫວ່າງ ຢູ່ເໜືອໝູ່ບ້ານ ຊ່ວຍ ພື້ນທີ່ປ່າໄມ້ຂະໜາດນ້ອຍ ຫຼາຍພື້ນທີ່ ທີ່ໄດ້ຮັບການຟື້ນຟູ, ຕັ້ງແຕ່ປ່າໄມ້ທີ່ຫາກໍ່ປູກໃໝ່ໆ, ຈົນໄປເຖິງ ປ່າໄມ້ທີ່ມີອາຍຸ 17 ປີ. ຊາວບ້ານ ມີແຫຼ່ງນ້ຳທີ່ປອດໄພຂຶ້ນ, ມີການສະໜອງຜະລິດຕະພົນປ່າໄມ້ຫຼາຍກວ່າເກົ່າ ແລະ ເຂົາເຈົ້າມີຊື່ສຽງໃນທາງບວກ ໃນຖານະເປັນຜູ້ອະນຸລັກ ອຸທະຍານແຫ່ງຊາດ.



# ແຜນກິດຈະກໍາ ການສຶກສາ ຂອງ ໜ່ວຍງານ **FORRU-CMU**





ການຄົ້ນຄວ້າ ຈະບໍ່ມີປະໂຫຍດຫຍັງເລີຍ ຖ້າເຫັນຜົນໄດ້ຮັບ ຢູ່ໃນໜ້າ ຂອງ ວາລະສານເທົ່ານັ້ນ, ຊຶ່ງບໍ່ຕ່າງຫຍັງກັບການສະສົມຂີ້ຝຸ່ນຢູ່ໃນຫໍສະໝຸດ. ດັ່ງນັ້ນ, ໜ່ວຍງານ FORRU-CMU ຈຶ່ງດໍາເນີນແຜນກິດຈະກໍາການສຶກສາ ເພື່ອຮັບປະກັນວ່າ ທຸກຄົນທີ່ມີສ່ວນຮ່ວມໃນການຟື້ນຟູປ່າໄມ້ ໄດ້ຮັບຜົນປະໂຫຍດ ຈາກ ການຄົ້ນຄວ້າຂອງໜ່ວຍງານ. ປື້ມກາຕູນເຫຼັ້ມນີ້ ເປັນພຽງໜຶ່ງໃນບັນດາຜະລິດຕະພັນ ຂອງ ໂຄງການ.

ແຜນກິດຈະກໍາໂຮງຮຽນ: ໜ່ວຍງານ FORRU-CMU ສະໜອງກິດຈະກໍາການສຶກສາ ສໍາລັບ ໂຮງຮຽນພາຍໃນ ແລະ ຕ່າງປະເທດ. ບາງຄັ້ງ, ພະນັກງານຂອງພວກເຮົາ ສະໜອງ ກິດຈະກໍາພາຍໃນໂຮງຮຽນ, ແຕ່ໂດຍປົກກະຕິແລ້ວ, ກຸ່ມຕ່າງໆ ຂອງ ໂຮງຮຽນ ລົງມາຢ້ຽມຢາມສວນກ້າເບ້ຍ ຫຼື ສະຖານທີ່ປູກຂອງ FORRU ຢູ່ເທິງດອຍສຸເທບ. ກິດຈະກໍາຕ່າງໆ ຢູ່ໃນສວນກ້າເບ້ຍ ປະກອບມີ ການຮຽນຮູ້ກ່ຽວກັບໝາກໄມ້ ແລະ ແກ່ນພັນ, ການປະຕິບັດກັບແກ່ນ ເພື່ອໃຫ້ມັນອອກໜໍ່ກໍາແໜງ, ການເອົາເບ້ຍໄມ້ໃສ່ໃນກະຖາງ ແລະ ການຮຽນຮູ້ ວິທີການບົວລະບັດຮັກສາພວກມັນ ຢູ່ໃນສວນກ້າເບ້ຍ. ຈາກສວນກ້າເບ້ຍຂອງພວກເຮົາ, ໃກ້ກັບວັດພະທາດດອຍສຸເທບ, ມີການຍ່າງປ່າ ແບບງ່າຍດາຍ ແລະ ມີການອະທິບາຍແນະນໍາ ເພື່ອຮຽນຮູ້ກ່ຽວກັບ ລະບົບນິເວດປ່າໄມ້ ແລະ ໄປເບິ່ງ ຕົ້ນໄມ້ທີ່ໃຫຍ່ທີ່ສຸດ ຢູ່ເທິງພູ. ກິດຈະກໍາຕ່າງໆ ແມ່ນປັບໃຫ້ເໝາະສົມກັບອາຍຸຂອງເດັກນ້ອຍ ແລະ ດໍາເນີນການເປັນພາສາໄທ ຫຼື ພາສາອັງກິດ, ຕາມຄວາມຕ້ອງການ.

ການຝຶກອົບຮົມ ສໍາລັບຜູ້ຊ່ຽວຊານ: ພວກເຮົາ ຍັງຈັດກອງປະຊຸມຝຶກອົບຮົມ ເປັນເວລາ 1-5 ວັນ ສໍາລັບເຈົ້າໜ້າທີ່ລັດຖະບານ, ອົງການ NGO, ອົງການສາກົນ ແລະ ນັກສຶກສາມະຫາວິທະຍາໄລ. ແຜນກິດຈະກໍາ ທີ່ເປັນມາດຕະຖານ 3 ມື້ ຂອງ ພວກເຮົາ ປະກອບມີ ໜຶ່ງວັນໃນຫ້ອງຮຽນ ເພື່ອຮຽນຮູ້ແນວຄວາມຄິດການຟື້ນຟູ ແລະ ການຄັດເລືອກຊະນິດພັນ, ໜຶ່ງວັນໃນສວນ ເພື່ອຮຽນຮູ້ກ້າກ່ຽວກັບເຕັກນິກການຂະຫຍາຍພັນຕົ້ນໄມ້ ແລະ ໜຶ່ງວັນ ທີ່ບ້ານແມ່ສະໃໝ ເພື່ອສົນທະນາກັບຄະນະກໍາມະການບ້ານ ກ່ຽວກັບດ້ານເສດຖະກິດ-ສັງຄົມ ຂອງ ການຟື້ນຟູ ແລະ ເພື່ອສຶກສາ ການກໍານົດຕອນດິນໃນພາກສະໜາມ, ການຕິດຕາມກວດກາ ແລະ ການຟື້ນຟູຊີວະນາໆພັນ. ໜ່ວຍງານນ FORRU-CMU ສາມາດອອກແບບກອງປະຊຸມໃຫ້ເໝາະສົມກັບຄວາມຕ້ອງການ ແບບສະເພາະເຈາະຈົງ, ສະນັ້ນກະລຸນາຕິດຕໍ່ພວກເຮົາໄດ້ທີ່ atcharawan.sw@gmail.com ຖ້າທ່ານສົນໃຈ.







**“ການຟື້ນຟູປ່າໄມ້ເຂດຮ້ອນຊຸ່ມ:**
**ຄູ່ມືປະຕິບັດ”**
ໂດຍ ທ່ານ ສະເຕເພັນ ເອລີອັອດທ໌,
ທ່ານ ເດວິດ ເບລັເຄັດສ໌ເລ, ແລະ
ທ່ານນາງ ເຄດ ດາວສ໌.
ສໍານັກພິມ **Kew Publishing,**
ພ້ອມດ້ວຍບົດນໍາ ໂດຍ ເຈົ້າຊາຍ
ແຫ່ງປະເທດເວວ.




ຖ້າທ່ານຕ້ອງການລາຍລະອຽດເພີ່ມຕື່ມ ກ່ຽວກັບສິລະປະ ແລະ ວິທະຍາສາດ ຂອງ ການຟື້ນຟູປ່າໄມ້, ພວກເຮົາຫາກໍ່ສໍາເລັດ ຄູ່ມືທີ່ຄົບຖ້ວນສະບັບນີ້. “ການຟື້ນຟູປ່າໄມ້ເຂດຮ້ອນຊຸ່ມ” ກໍານົດຂັ້ນຕອນລາຍລະອຽດ ກ່ຽວກັບວິທີການຟື້ນຟູລະບົບນິເວດປ່າໄມ້, ບໍ່ວ່າປ່າໄມ້ຈະເສື່ອມໂຊມ ຫຼື ຖືກທໍາລາຍກໍ່ຕາມ. ອີງຕາມແນວຄວາມຄິດ ແລະ ເຕັກນິກ, ທີ່ພັດທະນາ ຢູ່ທີ່ໜ່ວຍງານ FORRU - CMU ນັບຕັ້ງແຕ່ປີ 1994, ປຶ້ມຫົວນີ້ ກວມເອົາທຸກດ້ານຂອງການຟື້ນຟູປ່າໄມ້, ນັບຕັ້ງແຕ່ ການເລືອກສະຖານທີ່, ການໃຫ້ຊຸມຊົນທ້ອງຖິ່ນມີສ່ວນຮ່ວມ, ການລະດົມທຶນ ແລະ ການສ້າງແຜນໂຄງການ, ຈົນໄປຮອດ ການປູກຕົ້ນໄມ້ ແລະ ການຕິດຕາມຄວາມຄືບໜ້າ. ນອກຈາກນັ້ນ, ມັນຍັງອະທິບາຍ ວິທີການດໍາເນີນການຄົ້ນຄວ້າ ເພື່ອປັບປຸງ ວິທີການຟື້ນຟູ ແລະ ປັບພວກມັນໃຫ້ເຂົ້າກັບ ສະພາບນິເວດວິທະຍາ ແລະ ເສດຖະກິດ-ສັງຄົມ ພາຍໃນທ້ອງຖິ່ນ.

ປຶ້ມຫົວນີ້ ແມ່ນເປັນແຫຼ່ງຂໍ້ມູນ ທີ່ລ້ຳຄ່າ ສໍາລັບທຸກຄົນທີ່ສົນໃຈ ໃນການຟື້ນຟູປ່າໄມ້ເຂດຮ້ອນຊຸ່ມ, ລວມທັງຜູ້ຈັດຕັ້ງປະຕິບັດ, ນັກຄົ້ນຄວ້າ, ນັກສຶກສາ ແລະ ຜູ້ວາງນະໂຍບາຍ ແລະ ເປັນປຶ້ມທີ່ສໍາຄັນ ສໍາລັບຜູ້ທີ່ມີສ່ວນຮ່ວມ ໃນການປູກປ່າ ເພື່ອເກັບກັກກາກບອນ. ປຶ້ມທີ່ພິມອອກມາສາມາດສັ່ງຊື້ໄດ້ຜ່ານເວັບໄຊທ໌ ຂອງ ສໍານັກພິມ Kew (www.kewbooks.com/asps/ShowDetails.asp?id=1035) ຫຼື ເບິ່ງໄດ້ໂດຍບໍ່ເສຍຄ່າ ຜ່ານເວັບໄຊທ໌ ຂອງ ພວກເຮົາ (www.forru.org/en/content.php?mid=78).

# ວິທີການຕິດຕໍ່ ໜ່ວຍງານ **FORRU-CMU**




ຫ້ອງການ ໜ່ວຍງານຄົ້ນຄ້ວ ການຟື້ນຟູ ປ່າໄມ້ ຕັ້ງຢູ່ໃນຕຶກອາຄານ ຂອງ ຫໍສະໝຸດ ພຶດສາດ ຂອງ ພາກວິຊາຊີວະວິທະຍາ, ມະຫາວິທະຍາໄລຊຽງໃໝ່.

ທີ່ຢູ່ໄປສະນີ:
ໜ່ວຍງານຄົ້ນຄ້ວການຟື້ນຟູປ່າໄມ້
c/o ທ່ານ ປ.ອ. ສະເຕເພັນ ເອລີອັອດທ໌
ພາກວິຊາຊີວະວິທະຍາ, ຄະນະ
ວິທະຍາສາດ,
ມະຫາວິທະຍາໄລຊຽງໃໝ່
ຖະໜົນຫ້ວຍຂຽວ, ແຂວງຊຽງໃໝ່,
ປະເທດໄທ 50200

ໂທ:
053 943346 /3348 /1114 /1134
081 531 0894

ອີເມວ:
stephen_elliot1@yahoo.com
s.suwann@gmail.com

ເວັບໄຊທ໌ ຂອງ ພວກເຮົາ ສຳລັບຈອງ ແລະ ຂໍ້ມູນອື່ນໆ:
www.forru.org

ເຟດບຸກ ຂອງ ພວກເຮົາ ສຳລັບກິດຈະກຳໃນປັດຈຸບັນ:
www.facebook.com/forestrestorationresearchunit

ຊ່ອງ Youtube ຂອງ ພວກເຮົາ:
www.youtube.com/unser/FORRUCMU

Website

Facebook

Youtube

artRELIEF INTERNATIONAL

info@artrelief.net
www.artrelief.net

ພາລະກິດ ຂອງ Art Relief International ແມ່ນເພື່ອສົ່ງເສີມ ຄວາມຮັບຮູ້ ກ່ຽວກັບ ບັນຫາສັງຄົມທີ່ສຳຄັນ ແລະ ກະຕຸ້ນການປ່ຽນແປງ, ພ້ອມທັງປູກຝັງຄວາມຄິດສ້າງສັນ ໃນບັນດາກຸ່ມສັງຄົມ ທີ່ກຳລັງປະສົບກັບຄວາມຫຍຸ້ງຍາກ. ARI ສະເໜີບາງສິ່ງບາງຢ່າງ ທີ່ຫາຍາກ ໃຫ້ແກ່ບຸກຄົນ ແລະ ກຸ່ມຄົນ: ບັນຍາກາດທີ່ຍອມຮັບ ແລະ ການບຳບັດ ຮັກສາ ທີ່ບໍ່ພຽງແຕ່ສົ່ງເສີມ ການຍົກຍ້ອງ ສິລະປະເທົ່ານັ້ນ, ແຕ່ກໍຍັງເປັນທາງອອກ ສຳ ລັບຮັບມືກັບຄວາມຫຍຸ້ງຍາກ ໃນຊີວິດປະຈຳວັນ.







ARI ໃຊ້ສິລະປະທຸກຮູບແບບ, ນັບຕັ້ງແຕ່ການທາສີ ແລະ ການແຕ້ມຮູບ ຈົນໄປເຖິງ ການເຕັ້ນ ແລະ ລະຄອນ. ພວກ ເຮົາສົ່ງເສີມ ການສຳຫຼວດຕົນເອງ ໃຫ້ເປັນວິທີການ ປິ່ນປົວ, ມີຄວາມມ່ວນຊື່ນ ແລະ ຟື້ນຟູຈິດໃຈ, ຮ່າງກາຍ ແລະ ຈິດວິນຍານ.

ກອງປະຊຸມ ຂອງ Art Relief International ໄດ້ຮັບ ການວາງແຜນ ແລະ ຈັດຕັ້ງປະຕິບັດທັງໝົດ ໂດຍ ອາສາສະໝັກ. ຜູ້ຄົນທີ່ດີເລີດເຫຼົ່ານີ້ ມາຈາກທົ່ວທຸກມຸມ ໂລກ ເພື່ອດຳລົງຊີວິດ ແລະ ເຮັດວຽກຢູ່ຊຽງໃໝ່, ປະເທດ ໄທ.

ກະລຸນາເບິ່ງບລອກ (blog) ຂອງພວກເຮົາ, art-relief blogspot.com, ເພື່ອ ຕິດຕາມ ກອງປະຊຸມຂອງພວກເຮົາ ແລະ ເພື່ອຮັບແຮງບັນດານໃຈ ໃນການສ້າງສັນ. ທ່ານຍັງສາມາດຕິດຕາມພວກເຮົາໄດ້ທີ່ເຟດ ບຸກ (www.facebook.com/artreliefinternational) ແລະ ອິນສະຕາແກຣມ (@artreliefinternational) ເພື່ອເບິ່ງ ວຽກງານທີ່ພວກເຮົາເຮັດ ແລະ ທຳ ຄວາມເຂົ້າໃຈ ກ່ຽວກັບ ປະສົບການ ຂອງ ອາສາສະໝັກ.

# ບາງຂໍ້ຄວາມຈາກຜູ້ສະໜັບສະໜູນ




ເມື່ອອາກາດຮ້ອນແຮງ, ທ່ານມັກຈະໄປນັ່ງຢູ່ໃຕ້ຮົ່ມຕົ້ນໄມ້ ແລະ ຟັງສຽງໃບໄມ້ສຽດສີກັນ ໃນເວລາມີລົມພັດ ແມ່ນບໍ? ມັນເຢັນ ແລະ ຖ້າທ່ານເງີຍໜ້າຂຶ້ນ ເຈົ້າສາມາດເຫັນລວດລາຍຂອງໃບໄມ້ ໃນຂະນະທີ່ພວກມັນແກວ່ງໄປມາ ເມື່ອທຽບກັບທ້ອງຟ້າ. ຕົ້ນໄມ້ມີຄວາມສຳຄັນຫຼາຍ ສຳລັບພວກເຮົາ, ບໍ່ພຽງແຕ່ຍ້ອນວ່າພວກມັນເປັນຮົ່ມເງົາແກ່ພວກເຮົາເທົ່ານັ້ນ. ພວກມັນ ຍັງສະໜອງໄມ້ ສຳລັບເຮັດເຮືອນ ແລະ ເຟີນິເຈີ ແກ່ ພວກເຮົາ, ແລະ ຍັງເປັນເຊື້ອເພີງ ສຳລັບແຕ່ງຢູ່ຄົວກິນ. ພວກມັນຮັບປະກັນວ່າ ດິນຈະບໍ່ຖືກພັດໄປ ຍ້ອນຝົນຕົກໜັກ ແລະ ພວກມັນ ຍັງມີຄວາມສວຍງາມ.

ແຕ່ນັ້ນບໍ່ແມ່ນທັງໝົດ. ພວກມັນຜະລິດອົກຊີແຊນ ທີ່ພວກເຮົາຕ້ອງໄດ້ຫາຍໃຈເອົາ, ຖ້າພວກເຮົາຕ້ອງການມີຊີວິດຢູ່. ພວກມັນຍັງດັກຈັບ ອາຍກາກໂບນິກ. ເຈົ້າຮູ້ບໍ່ວ່ານັກວິທະຍາສາດສ່ວນໃຫຍ່ ເຊື່ອວ່າ ສະພາບອາກາດຂອງໂລກ ກຳລັງປ່ຽນແປງຢ່າງໄວວາ, ເພາະວ່າ ມີອາຍກາກໂບນິກ ຫຼາຍເກີນໄປ ຢູ່ໃນຊັ້ນບັນຍາກາດ?

ໃນຊີວິດຂອງຂ້າພະເຈົ້າ, ພວກເຮົາໄດ້ຕັດຕົ້ນໄມ້ຫຼາຍຈົນວ່າ ພວກເຮົາໄດ້ຫຼຸດຜ່ອນ ຄວາມສາມາດຂອງປ່າໄມ້ ໃນການດັກຈັບອາຍກາກໂບນິກ ແລະ ສະໜອງອົກຊີແຊນໃຫ້ແກ່ພວກເຮົາ. ມັນມີຄວາມສຳຄັນຫຼາຍ ທີ່ພວກເຮົາຕ້ອງທົດແທນປ່າໄມ້ ທີ່ພວກເຮົາໄດ້ທຳລາຍ ເພື່ອໃຫ້ປ່າໄມ້ສາມາດສືບຕໍ່ສະໜອງໄມ້, ອົກຊີແຊນ, ດັກຈັບອາຍກາກໂບນິກ ແລະ ຄວາມສວຍງາມ. ແຕ່ການປູກຕົ້ນໄມ້ຢ່າງດຽວ ແມ່ນບໍ່ພຽງພໍ. ປ່າໄມ້ ເປັນລະບົບນິເວດທີ່ສະຫຼັບຊັບຊ້ອນ, ທີ່ມີຕົ້ນໄມ້, ພືດ, ແມງໄມ້, ເຊື້ອເຫັດ, ສັດ ແລະ ນົກ ຫຼາຍຊະນິດພັນ. ຊີວິດຂອງພວກມັນ ເຊື່ອມໂຍງກັນ ແລະ ພວກມັນມັກຈະອາໄສກັນແລະກັນ. ຍົກຕົວຢ່າງ, ສັດມັກກິນໝາກໄມ້ ຈາກ ຕົ້ນໄມ້ ແລະ ດວຍການເຮັດເຊັ່ນນັ້ນ ມັນຂົນສົ່ງແກ່ນພັນ ໄປຍັງສ່ວນອື່ນໆຂອງປ່າ.

ທ່ານ ປ.ອ. ສະເຕເພັນ ເອລີອັອດທ໌ ແລະ ທີມງານຂອງເພິ່ນ ຢູ່ທີ່ໜ່ວຍງານຄົ້ນຄວ້າການຟື້ນຟູປ່າໄມ້, ມະຫາວິທະຍາໄລຊຽງໃໝ່ ໄດ້ພັດທະນາ ວິທີການທີ່ມີປະສິດທິພາບ ແລະ ຍືນຍົງ ໃນການຟື້ນຟູ ລະບົບນິເວດປ່າໄມ້ທີ່ສັບສົນ ແລະ ສັດປ່າທີ່ເຂົາເຈົ້າຊ່ວຍ. ອີງຕາມຜົນງານຂອງເຂົາເຈົ້າ, ທ່ານ ເຄດ ດາວູສີ ໄດ້ສ້າງປຶ້ມອັນດີເລີດສະບັບນີ້ ສຳລັບເດັກນ້ອຍ ທີ່ອະທິບາຍວ່າ ປ່າໄມ້ ຈະໄດ້ຮັບການຟື້ນຟູໃຫ້ກັບຄືນສູ່ສະພາບເດີມແນວໃດ ແລະ ຂ້າພະເຈົ້າດີໃຈຫຼາຍ ທີ່ສາມາດສະໜັບສະໜູນ ການພິມເຜີຍແຜ່ປຶ້ມດັ່ງກ່າວ.

ຂ້າພະເຈົ້າຫວັງວ່າ ທ່ານຈະມັກມັນ ແລະ ມັນຈະກະຕຸ້ນໃຫ້ທ່ານເຮັດບາງສິ່ງບາງຢ່າງ ທີ່ຈະອະນຸລັກປ່າໄມ້ ຂອງພວກເຮົາ, ດັ່ງນັ້ນ ທຸກຄົນສາມາດນັ່ງຢູ່ໃນຮົ່ມຂອງຕົ້ນໄມ້ ແລະ ເພີດເພີນໄປກັບການຫາຍໃຈເອົາອົກຊີແຊນ ທີ່ຕົ້ນໄມ້ຜະລິດອອກມາ.